ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===-----------

ກະຊວງການເງິນ

ເລກທີ: 3447 /ກງ.

ນະຄອນຫຼວງວຽງຈັນ, ວັນທີ 26 ຕຸລາ 2018

**ແຈ້ງການ**

ເຖິງ: ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ການຈັດຕັ້ງປະຕິບັດ ບັນຊີຫຼຸດຜ່ອນອັດຕາພາສີ ໃນກອບສັນຍາການຄ້າອາຊີປາຊີຟິກ (APTA) ຕາມສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017).**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2018;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການປະກາດໃຊ້ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017)ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018;
- ອີງຕາມ ບົດລາຍງານ ຂອງ ກົມພາສີ ສະບັບເລກທີ 06141/ກພສ, ລົງວັນທີ 17 ຕຸລາ 2018.

ເພື່ອເປັນການຜັນຂະຫຍາຍເນື້ອໃນຂອງດຳລັດວ່າດ້ວຍການປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (ASEAN Harmonized Tariff Nomenclature ~ AHTN 2017), ຮັບປະກັນການຈັດຕັ້ງປະຕິບັດພັນທະສັນຍາຂອງ ສປປ ລາວ ໃນກອບສັນຍາການຄ້າອາຊີປາຊີຟິກ (Asia-Pacific Trade Agreement ~ APTA) ແນໃສ່ການອຳນວຍຄວາມສະດວກທາງດ້ານການຄ້າ, ຄວາມເປັນເອກະພາບກັນໃນການຈັດລະຫັດສິນຄ້າ, ເຄື່ອງຂອງ ແລະ ການຈັດເກັບອັດຕາພາສີແລະພັນທະອື່ນ ໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ,

**ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ບັນຊີຫຼຸດຜ່ອນອັດຕາພາສີ (Tariff Reduction Schedule ~ TRS) ພາຍໃຕ້ກອບສັນຍາການຄ້າອາຊີປາຊີຟິກ (APTA) ແມ່ນໃຫ້ນຳໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017) ປ່ຽນແທນສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2012 (AHTN 2012);
2. ບັນຊີຫຼຸດຜ່ອນອັດຕາພາສີ ພາຍໃຕ້ກອບສັນຍາ APTA ຕາມ AHTN2017 ປະກອບດ້ວຍສິນຄ້າອຸປະໂພກ-ບໍລິໂພກທີ່ຖືກນຳມາຫຼຸດຜ່ອນອັດຕາ ຈຳນວນ 1,081 ລະຫັດ ມີອັດຕາພາສີ ແຕ່ 3.25% ຫາ 32%;
3. ມອບໃຫ້ກົມພາສີອອກບົດແນະນຳລະອຽດກ່ຽວກັບ ການຈັດຕັ້ງປະຕິບັດບັນຊີຫຼຸດຜ່ອນອັດຕາພາສີພາຍໃຕ້ກອບສັນຍາ APTA ຕາມ AHTN 2017 ພ້ອມທັງຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ເຂົ້າໃຈ;
4. ບັນຊີຫຼຸດຜ່ອນອັດຕາພາສີ ພາຍໃຕ້ກອບສັນຍາ APTA ຕາມ AHTN 2017 ມີຜົນບັງຄັບໃຊ້ນັບແຕ່ ວັນທີ 01 ພະຈິກ 2018 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ